## ວັນອາທິດໃບລານ ປີ A

## ວັນທີ 5 ເມສາ 2020



**ພຣະວໍລະສານໂດຍນັກບຸນມັດເທວ 21, 1-11**

ໃນເວລານັ້ນ, ພຣະເຢຊູເຈົ້າສະເດັດໄປເກືອບຈະເຖິງນະຄອນເຢລູຊາແລມ. ພໍມາເຖິງບ້ານເບັດຟາເຢໃກ້ກັບ "ພູໝາກກອກ". ພຣະອົງເລີຍສັ່ງບອກພວກລູກສິດສອງຄົນວ່າ: "ພວກເຈົ້າຈົ່ງພາກັນໄປບ້ານທີ່ຢູ່ຕໍ່ໜ້າພວກເຈົ້າ". ເມື່ອໄປຮອດພວກເຈົ້າຈະແນມເຫັນລາແມ່ໂຕໜຶ່ງລ່າມຢູ່ ແລະລູກນ້ອຍຂອງມັນລ່າມຢູ່ໃກ້ໆ. ຈົ່ງແກ້ເອົາທັງສອງແລ້ວຈູງມາໃຫ້ເຮົາ. ຖ້າມີໃຜຖາມພວກເຈົ້າແນວໃດແນວໜຶ່ງ ໃຫ້ພວກເຈົ້າຕອບວ່າ: "ພຣະອາຈານຕ້ອງການລາຂຸມນີ້. ແລ້ວພຣະອົງຈະສົ່ງຄືນມາໃຫ້ໃນບໍ່ຊ້າ". ນີ້ກໍເພື່ອໃຫ້ເປັນໄປຕາມປະພາສົກໄດ້ເວົ້າວ່າ: "ຈົ່ງບອກກັບນະຄອນເຢລູຊາແລມວ່າ: ນີ້ແລອົງກະສັດຂອງເຈົ້າສະເດັດມາຫາເຈົ້າດ້ວຍພຣະໄທເມດຕາອ່ອນຫວານ, ພຣະອົງໄດ້ປະທັບເທິງຫລັງລາແມ່ແລະລານ້ອຍອັນແມ່ນລູກຂອງສັດພາຫະນະ". ພວກລູກສິດທັງສອງກໍໄດ້ໄປແລະປະຕິບັດຕາມຄຳສັ່ງຂອງພຣະອົງ. ພວກເຂົາໄດ້ນຳເອົາລາແມ່ແລະລູກຂອງມັນມາ. ໄດ້ເອົາເສື້ອຄຸມຂອງຕົນປູເທິງຫລັງລາທັງສອງແລະເຊີນພຣະເຢຊູເຈົ້າສະເດັດຂຶ້ນປະທັບນັ່ງ.

ຝູງຊົນເປັນຈຳນວນມາກປູເສື້ອຜ້າຂອງຕົນຕາມເສັ້ນທາງສະເດັດ. ມີຫລາຍຄົນຕັດເອົາງ່າໄມ້ມາປູຕະຫລອດເສັ້ນທາງ. ແລ້ວທຸກຄົນທີ່ເດີນທາງໜ້າແລະທາງຫລັງພຣະອົງພາກັນໂຮຮ້ອງວ່າ: "ໂຮຊານນາບຸດພຣະຍາດາວິດ, ຂໍຊົງພຣະຈະເລີນ. ຂໍຖະຫວາຍພອນໃຫ້ທ່ານຜູ້ສະເດັດມາ ເດຊະພຣະນາມຂອງພຣະອົງເຈົ້າ. ໂຮຊານນາຢູ່ສະຫວັນສູງສຸດ".

ເມື່ອພຣະອົງສະເດັດເຂົ້າສູ່ນະຄອນເຢລູຊາແລມ, ທົ່ວທັງເມືອງພາກັນແຕກຕື່ນເວົ້າກັນວ່າ: "ຜູ້ນີ້ແມ່ນໃຜ? ຝູງຊົນຕອບວ່າ: "ແມ່ນເຢຊູ, ປະພາສົກຊາວນາຊາແລັດແຂວງກາລິເລ".

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ: ມທ 21, 1-11**

ຫລັງຈາກທີ່ໄດ້ຕຽມຈິດໃຈໃນກຳນົດບຳເພັນສິນດ້ວຍການພາວະນາ, ການກັບຈິດປ່ຽນໃຈແລະການແຜ່ເມດຕາຈິດ. ວັນນີ້ພວກເຮົາມາຊຸມນຸມກັນເພື່ອລະລຶກເຖິງການສະເດັດເຂົ້າສູ່ນະຄອນເຢລູຊາແລມຂອງພຣະເຢຊູເຈົ້າພ້ອມກັບພວກສາວົກເພື່ອຮັບທໍລະມານ, ຕາຍ. ແຕ່ວັນທີສາມພຣະອົງຈະກັບເປັນຄືນມາ. ເຫດການນີ້ໄດ້ເລີ່ມຂຶ້ນຫົກວັນກ່ອນວັນສະຫລອງປາສກາ.

ຄວາມຊື່ນຍິນດີຂອງຝູງຊົນທີ່ອອກມາຕ້ອນຮັບພຣະເຢຊູເຈົ້າແລະເດີນທາງຮ່ວມກັບພຣະອົງເຂົ້າສູ່ນະຄອນເຢລູຊາແລມເປັນເຄື່ອງໝາຍບອກລ່ວງໜ້າເຖິງຄວາມຊື່ນຍິນດີແຫ່ງການກັບເປັນຄືນມາຂອງພຣະເຢຊູເຈົ້າ.

ຄຳໂຮຮ້ອງຂອງຝູງຊົນ "ໂຮຊານນາ (ອັນມີຄວາມໝາຍ: ໂຜດຊ່ວຍເຖີດ!), ຂໍຖະຫວາຍພອນໃຫ້ທ່ານຜູ້ສະເດັດມາ ເດຊະພຣະນາມຂອງພຣະອົງເຈົ້າ". ເປັນຄຳໂຮຮ້ອງຊຶ່ງພວກຢິວໄດ້ໃຊ້ໃນວັນບຸນສະຫລອງຕູບຜາມ. ພວກເຂົາໄດ້ຖືກິ່ງໄມ້ຫລືໃບລານໃນມືແລ້ວເດີນອອ້ມພຣະແທ່ນພ້ອມທັງຮ້ອງຂຶ້ນວ່າ: "ໂຮຊານນາ, ຂໍຖະຫວາຍພອນໃຫ້ທ່ານຜູ້ສະເດັດມາ ເດຊະພຣະນາມຂອງພຣະອົງເຈົ້າ". ຄຳວ່າ "ຜູ້ຈະສະເດັດມາ" ໝາຍເຖິງພຣະເມດຊີອາ, ຜູ້ທີ່ພຣະເຈົ້າໄດ້ເລືອກສັນເພື່ອເປັນຕົວແທນຂອງພຣະອົງທ່າມກາງພວກເຂົາ. ວັນນີ້ສຳລັບຝູງຊົນ, ພຣະເຢຊູເຈົ້າເປັນພຣະເມດຊີອາ, ປະພາສົກຂອງພຣະເຈົ້າຜູ້ທີ່ຈະມາຊ່ວຍພວກເຂົາໃຫ້ຮອດ.

ວັນນີ້, ພຣະກຣິສຕະຈັກກໍເຊື້ອເຊີນພວກເຮົາໃຫ້ຮ່ວມໂຮຮ້ອງຍິນດີພ້ອມກັບຝູງຊົນແລະເດີນເຂົ້າສູ່ນະຄອນເຢລູຊາແລມຮ່ວມກັບພຣະເຢຊູ, ພຣະຜູ້ກູ້ໄຖ່ຂອງພວກເຮົາ.

ຖ້າພວກເຮົາສັງເກດກໍຈະເຫັນວ່າ ເມື່ອພຣະເຢຊູເຈົ້າຖືກຕັດສິນຕໍ່ໜ້າປີລາໂຕ, ຝູງຊົນທີ່ໄດ້ໂຮຮ້ອງຍິນດີວອນຂໍຄວາມຊ່ວຍເຫລືອຈາກພຣະເຢຊູເຈົ້າ, ພຣະເມດຊີອາຂອງພວກເຂົາ, ຈະກາຍເປັນຝູງຊົນທີ່ຮ້ອງຂຶ້ນວ່າ: "ເອົາມັນໄປຂ້າ, ເອົາມັນໄປຄຶງກາງເຂນ" (ມທ 27, 22-23). ພຣະເຢຊູເຈົ້າຜູ້ໄດ້ສັ່ງສອນພວກເຂົາໃນໂຮງທຳ, ຜູ້ໄດ້ປິ່ນປົວພະຍາດໂລຄາ, ຜູ້ໄດ້ທະວີເຂົ້າໜົມປັງເພື່ອລ້ຽງເກືອພວກເຂົາ. ວັນນີ້ສຳລັບພວກເຂົາ, ພຣະອົງໄດ້ກາຍເປັນນັກໂທດທີ່ສົມຕ້ອງຕາຍ. ທັດສະນະທ່າທີຂອງຝູງຊົນໄດ້ສະທ້ອນໃຫ້ພວກເຮົາເຫັນເຖິງທັດສະນະທ່າທີຂອງພວກເຮົາເຊັ່ນດຽວກັນ. ພວກເຮົາຜູ້ເຊື່ອໃນພຣະເຢຊູເຈົ້າ, ຜູ້ໄດ້ຟັງຄຳເທດສອນຂອງພຣະອົງ, ຜູ້ໄດ້ຮັບການລ້ຽງເກືອດ້ວຍພຣະກາຍແລະພຣະໂລຫິດຂອງພຣະອົງ. ສຳລັບພວກເຮົາ, ພຣະເຢຊູເຈົ້າແມ່ນໃຜ? ພຣະອົງແມ່ນຜູ້ທີ່ສະເດັດມາໃນນາມຂອງພຣະເຈົ້າບໍ? ຫລືພຣະອົງແມ່ນຜູ້ທີ່ຖືກພວກເຮົາປະຖິ້ມ, ຜູ້ທີ່ສົມຕ້ອງຕາຍ ?

ຂໍໃຫ້ວັນທີ່ພວກເຮົາກ້າວເຂົ້າສູ່ອາທິດສັກສິດ, ອາທິດແຫ່ງມະຫາທໍລະມານຂອງພຣະເຢຊູເຈົ້າເປັນວັນແຫ່ງຄວາມຮອດສຳລັບພວກເຮົາຜູ້ເປັນຄົນບາບ. ຍ້ອນອາໄສມະຫາທໍລະມານແລະການຕາຍຂອງພຣະເຢຊູເຈົ້າ ພວກເຮົາຈຶ່ງຈະໄດ້ຮອດ. ອາແມນ

ຄຸນພໍ່ ອັງຕວນ ກຽດຕິສັກ